


ຮູບທີ່1. ຜົນຜະລິດໃນດິນປ່າເລົ່າທີ່ແຕກຕ່າງກັນ


ເມັດເຂົ້າເປືອກ

## ພື້ນທີ່ເໝາະສົມໃນການປູກ

ເຂດພາກເໜືອ ແລະ ພາກໃຕ້ ເຊັ່ນ: ແຂວງຫຼວງພະບາງ, ແຂວງໄຊຍະບຸລີ, ແຂວງອຸດົມໄຊ, ແຂວງຫຼວງນໍ້າທາ, ແຂວງບໍ່ແກ້ວ, ແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງອັດຕາປື.


ເມັດເຂົ້າກ້ອງ

## ຂໍ້ຄວນລະວັງ

- ບໍ່ຄວນປູກໃນພື້ນທີ່ຮາບພຽງ ແລະ ມີຄວາມອຸດົມສົມບູນຂອງດິນສູງ (pH> 6)ຈະເກີດພະຍາດຈຸດສີນໍ້າຕານ (Brown Spot Disease)
- ປູກເປັນໄລຍະຍາວ ຄຸນນະພາບການກິນຫຼຸດລົງ (ເຂົ້າແຂງ) ຕ້ອງຄັດເລືອກແນວພັນທຸກໆປີ
- ບໍ່ຄວນປູກໃນພື້ນທີ່ປູກເຂົ້າຕໍ່ເນື່ອງກັນເປັນເວລາ 2-3 ປີ ຜົນຜະລິດຈະຫຼຸດລົງ
- ບໍ່ທົນທານຕໍ່ແມງໄຂ່ປາ (Root aphid).
- ເມັດໃກ້ຄໍຮວງມັກລີບ
- ແຕກກໍໜ້ອຍ

## ຂໍ້ມູນເພີ່ມເຕີມ

ສູນຄົ້ນກະສິກໍາ ແລະ ປ່າໄມ້ ພາກເໜືອ
ຕູ້ ປ ນ: 487
ໂທ: (856-71) 212099
ແຟກ: (856-71) 212467
Email: NAFReC@nafri.org.la

ກະຊວງກະສິກໍາ ແລະ ປ່າໄມ້
ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ແຫ່ງຊາດ
ສູນຄົ້ນຄ້ວາກະສິກໍາ ແລະ ປ່າໄມ້ ພາກເໜືອ

# ບົດແນະນໍາເຂົ້າໝາກຫີນສູງ



ໂດຍ: ຄໍາຫລ້າ ພັນທະບູນ
ທັນວາ, 2009

## *ປະຫວັດຄວາມເປັນມາ*

ແນວພັນເຂົ້າໝາກທິບສູງ (LG6432) ແມ່ນແນວພັນເຂົ້າບົກພື້ນເມືອງຂອງທ້ອງຖິ່ນ ເມືອງນ້ຳບາກ, ແຂວງຫຼວງພະບາງ, ເຊິ່ງໃນປີ 1995 ຫາ 2000 ໂຄງການ ອະນຸຮັກເຊື້ອພັນ ເຂົ້າ (Lao – IRRI Biodiversity project) ໄດ້ ເກັບໂຮມແນວພັນເຂົ້າໃນທົ່ວປະເທດໄດ້ 13,192 ຕົວຢ່າງ, ໃນນັ້ນມີ ແນວພັນເຂົ້າບົກ 7,371 ຕົວຢ່າງ ໄດ້ນຳມາເກັບມ້ຽນ ແລະ ຮັກສາໄວ້ໃນທະນາຄານເຊື້ອພັນເຂົ້າລາວ.

ປີ 1998 ໄດ້ນຳມາສຶກສາ ແລະ ຄັດເລືອກ ທີ່ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກ ເໜືອ.

ປີ 2001 ໄດ້ນຳໄປປູກທົດລອງໃນພື້ນທີ່ຂອງຊາວກະສິກອນ ໃນ 3 ແຂວງພາກເໜືອຄື: ຫຼວງພະບາງ, ອຸດົມໄຊ ແລະ ຫຼວງນ້ຳທາ.

ປີ 2002 ໄດ້ນຳໄປທົດລອງ ການຄັດເລືອກແບບມີສ່ວນຮ່ວມຂອງຊາວກະສິກອນໃນ 8 ແຂວງພາກເໜືອ, ຜ່ານຈາກການທົດລອງເຫັນວ່າ ສາມາດປັບຕົວໄດ້ດີ ແລະ ເປັນທີ່ຍອມຮັບຂອງຊາວກະສິກອນ.

## *ລັກສະນະປະຈຳພັນ*

- ເປັນປະເພດເຂົ້າໜຽວມີຄວາມຮູ້ສຶກຕໍ່ຊ່ວງແສງ, ອາຍຸ 135 – 140 ວັນ.
- ຊ່ວງປູກ ທ້າຍເດືອນ ເມສາ (4) - ຕົ້ນເດືອນ ມິຖຸ (6) ຊ່ວງໄລຍະຝົນຕົກ.
- ລຳຕົ້ນສູງປະມານ 105 – 145 ຊັງຕີແມັດ, ລຳຕົ້ນແຂງ, ສີເຟືອງ.
- ໃບເປັນສີຂຽວ, ແຜ່ນໃບບໍ່ມີຂົນ, ໃບກ້ວາງ.
- ເມັດເຂົ້າເປືອກກ້ຽງ (ບໍ່ມີຂົນ) ເປັນສີເຟືອງຂີດສີນ້ຳຕານແກ່.
- ເມັດໃຫຍ່, ຍາວ 9.24 ມິນລິແມັດ, ກ້ວາງ 4.06 ມິນລິແມັດ, ໜາ 2.5 ມິນລິແມັດ.
- ເມັດເຂົ້າກ້ອງ ຍາວ 6.8 ມິນລິແມັດ, ກ້ວາງ 3.38 ມິນລິແມັດ, ໜາ 2.22 ມິນລິແມັດ.
- ຄຸນນະພາບການສີດີ, ເມັດເຂົ້າສານສີຂາວ, ປະລິມານອາມີໂລດ (6.9%)
- ນ້ຳໜັກ 1000 ເມັດ 42 ກຣາມ.



ລັກສະນະພາຍນອກ



ການຖອກຮວງ

## *ລັກສະນະເດັ່ນ*

- ຜົນຜະລິດສູງກ່ວາແນວພັນພື້ນເມືອງ 18%
- ເຫດຜົນຊາວກະສິກອນມັກ: ເມັດໃຫຍ່, ຮວງໃຫຍ່, ລຳຕົ້ນໜາ, ໃຫ້ຜົນຜະລິດດີ.
- ສາມາດປູກໄດ້ໃນລະດັບຄວາມສູງຈາກໜ້ານ້ຳ ທະເລ 300 – 1000 ແມັດ.

## *ຜົນຜະລິດ*

ໃຫ້ຜົນຜະລິດສູງກ່ວາພັນພື້ນເມືອງໃນພື້ນທີ່ປູກເຂົ້າຕໍ່ເນື່ອງ ແລະ ດິນປ່າເລົ່າອ່ອນ 165-360 ກິໂລຕໍ່ເຮັກຕາ